**ສົງຄາມ ແລະ ສັນຕິພາບ** *( ຈາກທັມມະລີລາ )* *ຄໍາບາລີສັບ*

ບໍ່ວ່າຍຸກໃດສມັຍໃດ ໂລກຍອ່ມບໍ່ອາດຈະຫລີກພົ້ນຈາກການບຽດບຽນກັນ ຂອງມະນຸດ ແລະສັດທັງຫລາຍ ມະນຸດກໍ່ຍັງບຽດບຽນມະນຸດດວ້ຍກັນເອງກໍ່ມີ ມະນຸດບຽດບຽນສັດກໍ່ມີແລະສັດຖືກບຽດບຽນໂດຍມະນຸດກໍ່ມີ ຈຶ່ງເຮັດໃຫ້ເຫັນສັດຈະທັມປະການນຶ່ງນັ້ນກໍ່ຄື **ໂລກບໍ່ວາງເວັ້ນຈາກການບຽດບຽນກັນ-**

ການບຽດບຽນດັ່ງກ່າວໃນຂ້າງຕົ້ນນີ້ ຖ້າເປັນການບຽດບຽນໃນວົງຈໍາກັດໃນທີ່ແຄບກໍ່ເບິ່ງວ່າຈະບໍ່ສົ່ງຜົນຕໍ່ສັງຄົມຫລາຍໜັກ ແຕ່ການບຽດບຽນທີ່ເກີດຂຶ້ນແລະຂຍາຍຕົວອອກໄປດວ້ຍການຕໍ່ສູ້ດວ້ຍອາວຸດທີ່ມີອານຸພາບຮຸນແຮງກໍ່ຕາມ ນັ້ນກໍ່ຄືສົງຄາມຊຶ່ງມີຊື່ເອີ້ນກັນຢ່າງມາກມາຍຕາມຮູບແບບຂອງການຮົບ ເຊັ່ນ ສົງຄາມນອ້ຍໆໄປສູ່ສົງຄາມໃຫ່ຽ ຈົ່ນກາຍເປັນສົງຄາມໂລກໃນທີ່ສຸດທີ່ມະນຸດໄດ້ປະເຊີນໜ້າມາແລ້ວເຖິງສອງຄັ້ງ

**ພຣະພຸທເຈົ້າຊົງມີຄວາມຊັດເຈນໃນເຣື້ອງການເມືອງການສົງຄາມແລະສັນຕິພາບ ຊຶ່ງເປັນເຣື້ອງທີ່ຮູ້ແລະເຂົ້າໃຈກັນດີ ໃນໝູ່ຜູ້ນັບຖືພຣະພຸທສາສນາ ແລະຜູ້ສຶກສາກ່ຽວກັບພຸທສາສນາວ່າ ພຣະພຸທສາສນານັ້ນປະກາດແລະເຜີຍແຜ່ອະຫິງສະທັມ ຄືການບໍ່ບຽດບຽນ ແລະສັນຕິພາບຈະເຫັນໄດ້ຈາກສິນ-5-ເປັນຕົ້ນ ອັນເປັນຄືສາສນາສາກົນໂດຍເປັນສາສນາທີ່ຄັດຄ້ານແລະບໍ່ເຫັນດວ້ຍກັບການໄຊ້ຄວາມຮຸນແຮງໂດຍປະການທັງປວງ ບໍ່ວ່າ ການຮຸນແຮງນັ້ນຈະເຖິງຂັ້ນທໍາໃຫ້ຄົນໄດ້ຮັບບາດເຈັບເລັກນອ້ຍ ສູນເສັຽອະວັຍຍະວະ ຫຼືສູນເສັຽຊີວິດກໍ່ຕາມ**

ສົງຄາມຝ່າຍທັມຈຶ່ງມັກຖືກເອີ້ນຂານຫຼືບັນຍັດຂຶ້ນມາຢ່າງຜິດໆ ພຽງເພື່ອສະແດງຄວາມຊອບທັມແລະຂໍ້ແກ່ຕົວ ໃຫ້ແກ່ຄວາມໂກດຄວາມໂຫດຮ້າຍທາຣຸນ ການສັງຫານໝູ່ໃຜຈະຕັດສິນໄດ້ວ່າ ທັມ ຫຼືຝ່າຍໃດເປັນອະທັມ-ຜູ້ທີ່ເຂັ້ມແຂງແລະເປັນຝ່າຍຊນະ ຄື ຝ່າຍທັມ ສວ່ນຜູ້ທີ່ອອ່ນແອແລະເປັນຜູ້ແພ້ ຄື ຝ່າຍ ອະທັມ ສິ່ງຄວາມຂອງຕົນເປັນ ຝ່າຍ ທັມແລະສິ່ງຄວາມຂອງຝ່າຍຕຣົງຂ້າມເປັນຝ່າຍອະທັມ ຊຶ່ງເປັນຢູ່ຢ່າງນີ້ໃນໂລກປັດຈຸບັນ ແຕ່ພຣະພຸທສາສນາບໍ່ຍອມຮັບຈຸດຢືນແບບນີ້ແລະປະຕິເສດໂດຍຊິ້ນເຊີງ

**ພຣະພຸທເຈົ້າຊົງຢືນຢັນແລະຊົງຢືນຫຍັດຢ່າງໜັກແໜ້ນ ໃນອະຫິງສະທັມແລະສັນຕິພາບ** ພຣະອົງຊົງປະຕິເສດການຂ້າສັດ ເພື່ອບູຊາຍັນຕໍ່ເທພເຈົ້າ ເພື່ອໃຫ້ເທພເຈົ້າປະທານຄວາມ

ສຸກແລະສວັດດີມົງຄົນແກ່ຜູ້ບູຊາຍັນ ເປັນການບຽດບຽນສັດອື່ນແລະເປັນບາບ ແລະຊົງຖາມກັບໄປຍັງຜູ້ບູຊາຍັນວ່າ

*ຖ້າການຂ້າສັດບູຊາຍັນເປັນຄວາມດີ ເປັນບຸນ ເຮັດໃຫ້ມະນຸດບໍ່ຂ້າປິຍະຊົນຄົນທີ່ຕົນຮັກເພື່ອບູຊາຍັນແນ່ ຈະໄດ້ຮັບຄວາມສຸກແລະສວັດດີມົງຄົນຫລາຍກົ່ວຂ້າສັດບູຊາຍັນ*

ຊຶ່ງສະແດງໃຫ້ເຫັນວ່າ ການສແວງຫາຄວາມສຸກສວັດດີນັ້ນ ຕອ້ງບໍ່ບຽດບຽນຜູ້ອື່ນ-ດວ້ຍຄຳຖາມກັບເຊັ່ນນີ້ ຈຶ່ງເຮັດໃຫ້ອິນເດັຍປັດຈຸບັນງົດເວັ້ນການຂ້າສັດບູຊາຍັນລົງໄປຫລາຍທີ່ດຽວ ແມ່ນໃນການສົງຄາມ ພຣະອົງກໍ່ໄດ້ປະກົດໃນທ່າມກາງສນາມຣົບ ຊົງເຂົ້າໄປທຳຄວາມເຂົ້າໃຈຕໍ່ຄູ່ສົງຄາມ ຊົງປົກປອ້ງບໍ່ໃຫ້ເກີດສົງຄາມດັ່ງເຊັ່ນ ກໍຣະນີຜິດພາດໃນການແຍ່ງຊົງນ້ຳໃນແມ່ນ້ຳໂຣຫິນີ ຣະຫວ່າງຝ່າຍສາກຍະແລະໂກລິຍະ ຊຶ່ງຕຽມຍົກພົລເຂົ້າຣົບກັນ ພຣະອົງຕັດຖາມທັງສອງຝ່າຍວ່າ-( ນ້ຳກັບເລືອດນັ້ນ ອັນໄດມີຄ່າຫລາຍກົ່ວກັນ-ກໍ່ຊົງໄດ້ຮັບຄຳຕອບວ່າ-ເລືອດມີຄ່າຫລາຍກົ່ວ

ຈຶ່ງຕັດຖາມຕໍ່ໄປວ່າ-ເມື່ອເລືອດມີຄ່າຫລາຍກົ່ວແລ້ວ ຈະເຮັດສົງຄາມເຂັ່ນຂ້າກັນເຮັດຫຍັງ-ດວ້ຍການສະເດັດຫ້າມສົງຄາມໃນຄັ້ງນັ້ນ ຈຶ່ງເຮັດໃຫ້ເກີດພຣະພຸທຮູບປາງນຶ່ງ ເອີ້ນວ່າ-ປາກຫ້າມຍາດ ທີ່ຄົນລາວເຮົາຮູ້ຈັກກັນດີ-( ອີກຄັ້ງນຶ່ງ )-ພຣະເຈົ້າອະຊາດສັດຕຣູ ຍົກທັບໄປຕີເມືອງໄພສາລີ ແຄວ້ນວັດຊີ **ຣະຫວ່າງທາງ ສະເດັດໄດ້ພົບ ພຣະພຸທເຈົ້າປະທັບນັ່ງຂວາງທາງຢູ່ ກໍ່ຊົງຮູ້ວ່າພຣະພຸທເຈົ້າບໍ່ຊົງໃຫ້ເຮັດສົງຄາມກັບແຄວ້ນວັດຊີ**-ຈຶ່ງສະເດັດຍົກພົລກັບກຸງຣາຊຄຶ ແຄວ້ນນະຄອນແຕ່ພາຍຫລັງທີ່ພຣະພຸທເຈົ້າປະຣິນິບພານແລ້ວ ພຣະເຈົ້າອະຊາດ ສັດຕຣູ ໄດ້ກະຣິທາທັບໄປຕີແຄວ້ນວັດຊີໄດ້ດັ່ງພຣະຣາຊປະສົງ

ໃນສມັຍພຸທການກໍ່ເຊັ່ນດຽວກັນກັບສມັຍປັດຈຸບັນ ທີ່ມີຜູ້ປົກຄອງປະເທດຫຼືເປັນຣັຖບານປົກຄອງປະເທດ ໂດຍຂາດ ຫລັກຄວາມຍຸຕິທັມ ປະຊາຊົນຖືກກົດຂີ່ຂົ່ມເຫງຮັງແກ ຖືກເອົາຣັດເອົາປຽບຖືກກັ່ນແກ້ງຖືກຂ້າຕາຍ ຫຼືຖືກທໍຣະມານໃຫ້ຮັບທຸກແສນສາຫັດ ໂດຍວິທີການລົງໂທດຢ່າງໂຫດຮ້າຍ ຖືກເອີ້ນເກບພາສີເກີນຂອບເຂດ ຍົກເວັ້ນພາສີແກ່ພວກຕົນແລະເອື້ອປະໂຍດແກ່ຕົນແລະພວກພອ້ງຂອງຕົນຢ່າງໄຮ້ຄວາມລະອາຍ ພຣະພຸທເຈົ້າຊົງສລົດພຣະທັຍຕໍ່ການກະທຳທີ່ໄຮ້ມະນຸດສະທັມເຫລົ່ານີ້ ພຣະອົງຕັດຊາ
ດົກໃວ້ໃນພຣະທັມມະບົດເຣື້ອງ

**ມະຫາປິງຄົນຊາດົກ** ເປັນອຸທາຫອນເຖິງຄວາມບໍ່ຊອບທັມໃນການປົກຄອງບ້ານເມືອງຂອງຜູ້ບໍຣິຫານປະເທດ-ໃນອະດີຕການ ພຣະເຈົ້າມະຫາປິງຄົນບໍ່ດຳນົງຢູ່ໃນຄວາມຍຸຕິທັມຊົງປົກຄອງປະເທດດ້ວຍຄວາມໂຫດຫ້ຽມ ປະຊາຊົນເດືອດຮ້ອນໄປທົ່ວ ເມື່ອພຣະອົງສວັນນະຄົດ ປະຊາຊົນຕ່າງກັນມີງານສເລີມສລອງກັນທົ່ວເມືອງ ເຂົາເຈົ້າດີໃຈທີ່ໄດ້ພົ້ນຈາກການກົດຂີ່ຂົ່ມເຫງຂອງພຣະອົງ ແຕ່ມີຍາມເຝົ້າປະຕູພຣະຣາຊວັງຄົນນຶ່ງຢືນຮ້ອງໄຫ້ ພຣະໂພທິສັດຊຶ່ງເປັນພຣະຣາຊາອົງໃໝ່ສະເດັດເຂົ້າໄປຕຣັດຖາມວ່າ-ຮ້ອງໄຫ້ຄິດເຖິງພຣະເຈົ້າມະຫາປິງຄົນຫຼື-ສ່ວນຄົນຍາມເຝົ້າປະຕູຕອບວ່າ-ຫາບໍ່ໄດ້ ທີ່ຮ້ອງໄຫ້ຢູ່ນີ້ເກ່ງວ່າເມື່ອພຣະອົງສວັນນະຄົດແລ້ວຈະໄປບຽດບຽນຍົມມະບານຍົມມະທູດໃຫ້ເດືອດຮ້ອນ ພວກເຂົາກໍ່ຈະສົ່ງພຣະອົງກັບມາເກີດອີກ ຂ້າພຣະອົງຈຶ່ງ ຮ້ອງໄຫ້ເພາະເຫດນີ້ ຂໍ້ນີ້ສະແດງວ່າ ຜູ້ປົກຄອງບ້ານເມືອງຫຼື ຣັຖບານນັ້ນ ທີ່ໂຫດຮ້າຍຕໍ່ປະຊາຊົນ ບໍ່ໄດ້ສ້າງ ຄວາມທຸກຮ້ອນແຕ່ສະເພາະໃນໂລກນີ້ແມ່ນລະໂລກນີ້ໄປແລ້ວ ຄົນກໍ່ຍັງວິຕົກທຸກຮ້ອນ ວ່າຈະກັບມາເກີດແລະມາທຳຄວາມເດືອດຮ້ອນແກ່ເຂົາອີກ- ເຮັດຢ່າງໃດໂລກຈຶ່ງຈະໄດ້ຣັຖບານທີ່ບໍ່ກໍ່ສົງຄາມ ແຕ່ຢຶດຖືຢູ່ໃນຫລັກອະຫິງສະທັມແລະສັນຕິພາບຢ່າງພຣະພຸທເຈົ້າຊົງສອນໄວ້

**ຂັນຫ້າ-**

**ອະຣິຍະສັດ**-ອັນທັມຫຼືທັມມະນັ້ນໂດຍຕຣົງກໍ່ໄດ້ແກ່ສັດຈະຄືຄວາມຈິງຂອງຈິງ ດັ່ງທີ່ເອີ້ນຄູ່ກັນວ່າ ສັດຈະທັມ ທັມມະຄືສັດຈະ ແຕ່ອັນຄວາມຈິງຫຼືຂອງຈິງນີ້ທີ່ເປັນອະຣິຍະສັດຈະຄືຄວາມເປັນຈິງຫຼືຂອງຈິງທີ່ເຮັດຜູ້ຮູ້ໃຫ້ເປັນອະຣິຍະ ຄືຜູ້ປະເສີດຜູ້ຈະເຣີນ ກໍ່ໄດ້ແກ່ອະຣິຍະສັດທັງສີ່ ຄື **ທຸກຄະສັດຈະ** ຄວາມຈິງຂອງຈິງຄືທຸກ **ສະມຸທັຍສັດຈະ** ຄວາມຈິງຂອງຈິງສະມຸທັຍ ເຫດໃຫ້ເກີດທຸກ **ນິໂຣດສັດຈະ** ຄວາມຈິງຂອງຈິງຄືນິໂຣດ ຄວາມດັບທຸກ **ມັກສັດຈະ** ຄວາມຈິງຂອງຈິງຄືມັກ ທາງປະຕິບັດໃຫ້ເຖິງຄວາມດັບທຸກ

ສັດຈະທັງສີ່ນີ້ເປັນຫລັກແຫ່ງພຸທສາສນາ ແລະທຸກຂະສັດຈະ ສັດຈະຄືທຸກຂໍ້ແຣກນັ້ນກໍ່ໄດ້ມີພຸທພາສິດຕຣັດໄວ້ວ່າກ່າວໂດຍຍໍ້-ອຸປະທານຂັນຄືຂັນເປັນທີ່ຢຶດຖືທັງຫ້າ ເປັນທຸກດັ່ງນີ້ ເພາະສະນັ້ນຂັນຫ້າຈຶ່ງເປັນຂໍ້ສຳຄັນ ທີ່ຜູ້ປະຕິບັດທັມທາງປັນຍາ ຈະພວມສຶກສາສຳນຽງໃຫ້ມີຄວາມຮູ້ຄວາມເຂົ້າໃຈ ແລະຂັນທັງຫ້ານີ້ກໍ່ບໍ່ໄດ້ຢູ່ທີ່ໃດດອກ
ຢູ່ທີ່ບຸກຄົນທຸກໆ ຄົນນີ້ເອງ

ການສຶກສາສຳນຽງກໍ່ສຶກສາສຳນຽງຕາມ ຄຳສັ່ງສອນຂອງພຣະພຸທເຈົ້າທີ່ຕັດສະແດງຊີ້ ແລະກໍ່ສຶກສາສຳນຽງທີ່ຕົນເອງໃຫ້ຮູ້ຈັກຂັນທັງຫ້າທີ່ຕົວເອງ(ຄຳວ່າ)**ຂັນ** ນັ້ນກໍ່ແປວ່າ**ກອງ** ກອງນັ້ນແປວ່າ-**ປະຊຸມ**-ດັ່ງທີ່ຮູ້ກັນກໍ່ເພາະມີຫລາຍໆສິ່ງມາຮວ່ມກັນເຂົ້າເປັນກອງ ຫຼື ມາປະຊຸມກັນເຂົ້າ ຄຳວ່າຂັນແປວ່າກອງຫຼືປະຊຸມດວ້ຍ ມີຄວາມໝາຍຢ່າງນີ້ເພາະຂັນ ທັງຫ້າແຕ່ຣະຂັນນັ້ນ ກໍ່ມີຫລາຍຢ່າງມາປະຊຸມຮ່ວມກັນເຂົ້າເປັນ ກອງ ເໝືອນຢ່າງ ໝາກໄມ້ຫລາຍໆ ຢ່າງມາຣວມກັນຢູ່ເປັນກອງ

**ຣູບຂັນ**

**ຣູບຂັນ** ກອງຣູບ ເມື່ອກ່າວໂດຍຍໍ້ກໍ່ໄດ້ແກ່ **ມະຫາດຣູບ** ຣູບທີ່ເປັນໃຫ່ຽອັນໝາຍເຖິງ ທາດທັງສີ່ ທີ່ມາປະຊຸມກັນຢູ່ຄື **ປະຖະວີທາດ** ທາດດິນ **ອາໂປທາດ** ທາດນ້ຳ **ເຕໂຊທາດ** ທາດໄຟ **ວາໂຍທາດ** ທາດລົມ ອີກຢ່າງນຶ່ງທາດຫ້າກໍ່ເຕີມອາກາດທາດຄືຊ່ອງວ້າງເຂົ້າອີກ ນຶ່ງ ແຕ່ໂດຍ ຫລາຍສະແດງທາດສີ່ ກໍ່ໝາຍເຖິງບັນດາສວ່ນທັງຫລາຍໃນຮ່າງກາຍອັນນີ້ ຊຶ່ງສ່ວນທີ່ແຂງ ກໍ່ຣວມເອີ້ນວ່າ **ທາດດິນ** ສວ່ນທີ່ເອີບອາບກໍ່ຣວມເອີ້ນວ່າ **ທາດນ້ຳ** ສວ່ນທີ່ ອົບອຸ່ນກໍ່ຣວມ ເອີ້ນວ່າ **ທາດໄຟ** ສວ່ນທີ່ພັດໄປກໍ່ຣວມເອີ້ນວ່າ **ທາດລົມ** ດັ່ງນີ້ຄືມະຫາດຣູບ ແປວ່າຣູບທີ່ເປັນໃຫ່ຽຫຼືເປັນສວ່ນໃຫ່ຽ ອີກຢ່າງນຶ່ງ **ອຸປາທາຍຣູບ** ຣູບອາສັຍໄດ້ແກ່ຣູບພິເສດ ທີ່ອາສັຍຢູ່ ໃນມະຫາດຣູບທັງສີ່ນີ້ ເປັນຕົ້ນວ່າ **ຈັກສຸປະສາດ** ປະສາດຕາ **ໂສດປະສາດ** ປະສາດ ຫູ **ຂານປະສາດ** ປະສາດຮູດັງ **ຊິວະຫາປະສາດ** ປະສາດລີ້ນ **ກາຍປະສາດ** ປະສາດກາຍແລະອື່ນໆ ອີກຫລາຍຢ່າງຫລາຍປະການ ບັນດາຣູບທີ່ອາສັຍຢູ່ ອັນມີລັກ ສະນະພິເສດເຫລົ່ານີ້ຣວມເອີ້ນວ່າ ອຸປາທາຍຣູບ ແປວ່າຣູບອາສັຍແລະອັນທີ່ຈິງອຸປາ ທາຍຣູບນີ້ ກໍ່ສຣຸບ ເຂົ້າໃນມະຫາດຣູບທັງສີ່ນັ້ນແຫລະ ຄືເປັນທາດດິນແນ່ ທາດນ້ຳແນ່ ທາດໄຟແນ່ ທາດລົມແນ່ ປະກອບກັນຢູ່ ນີ້ຄືຣູບຂັນ ກອງຣູບ

**ເວທນາຂັນ**

**ເວທນາຂັນ** ກອງເວທນາຄືຄວາມຮູ້ສຶກເປັນສຸຂເປັນທຸກຫຼືເປັນກາງໆ ບໍ່ທຸກບໍ່ສຸກ ກໍ່ຈຳ ແນກໄດ້ອອກເປັນຫົກ ຄືເວທນາທີ່ເກີດຈາກ **ຈັກຂຸສັມຜັດ** ສັມຜັດທາງຕາເວທນາທີ່ເກີດ ຈາກ **ໂສດສັມຜັດ** ສັມຜັດທາງຫູ **ຂັນສັມຜັດ** ເວທນາທີ່ເກີດຈາກຂັນ ສັມຜັດທາງຮູດັງ ເວທນາທີ່ເກີດຈາກ **ຊິວະຫາສັມຜັດ** ສັມຜັດທາງລີ້ນ

ເວທນາທີ່ເກີດຈາກ **ກາຍສັມຜັດ** ສັມຜັດທາງກາຍ ແລະເວທນາທີ່ເກີດຈາກ **ມະໂນສັມຜັດ** ສັມຜັດທາງໃຈ ນີ້ຄືເວທນາຂັນ ກອງເວທນາ

**ສັນຍາຂັນ**

**ສັນຍາຂັນ** ກອງສັນຍາຄວາມຈຳໝາຍກໍ່ແບ່ງໄດ້ເປັນຫົກ ຄື**ຈຳໝາຍຮູບ- ຈຳໝາຍສຽງຈຳໝາຍລິ້ນ- ຈຳໝາຍຣົດ- ຈຳໝາຍສິ່ງທີ່ຖືກຕ້ອງທາງກາຍ- ຈຳໝາຍທັມ** ຊຶ່ງໃນທີ່ນີ້ໝາຍເຖິງເຣື້ອງຣາວ ທີ່ຮູ້ທີ່ຄິດທາງໃຈ ນີ້ຄືສັນຍາຂັນ ກອງສັນຍາຂັນ

**ສັງຂານຂັນ**

**ສັງຂານຂັນ** ກອງສັງຂານຄືຄວາມຄິດປຸງຫຼືຄວາມປຸງຄິດ ຊຶ່ງສັງຂານໃນທີ່ນີ້ໝາຍເຖິງສັງຂານທາງຈິດ ຄືຄວາມຄິດປຸງຫຼືຄວາມປຸງຄິດຕ່າງໆ ຄິດດີແນ່ຄິດບໍ່ດີແນ່ຄິດເປັນກາງໆແນ່ ຊຶ່ງກໍ່ອາດແບ່ງໄດ້ຫົກເໝືອນກັນ **ຄືຄວາມຄິດປຸງຮູບ ຄວາມຄິດປຸງສຽງ ຄວາມຄິດປຸງກິ່ນ ຄວາມຄິດປຸງຣົດ ຄວາມຄິດປຸງສິ່ງທີ່ຖືກຕອ້ງທາງກາຍ**ແລະ**ຄວາມຄິດປຸງທັມ** ຄືເຣື້ອງຣາວທັງເບິດ ຂອງຮູບສຽງເປັນຕົ້ນ ນີ້ກໍ່ຄືສັງຂານ ກອງສັງຂານ

**ວິນຍານຂັນ**

**ວິນຍານຂັນ** ກອງວິນຍານ ວິນຍານກໍ່ໄດ້ແກ່ຄວາມຮູ້ສຶກ ກໍ່ແບ່ງໄດ້ເປັນຫົກເໝືອນກັນ **ຈັກສຸວິນຍານ** ຄືຄວາມຮູ້ສຶກເຫັນຮູບທາງຕາ **ໂສດວິນຍານ** ຄືຄວາມຮູ້ສຶກໄດ້ຍິນສຽງທາງຫູ **ຂານວິນຍານ** ຄືຄວາມຮູ້ສຶກຊາບກິ່ນທາງຮູດັງ **ຊິມຫາວິນຍານ** ຄືຄວາມຮູ້ສຶກຊາບຣົດທາງລີ້ນ **ກາຍວິນຍານ** ຄືຄວາມຮູ້ສຶກຊາບສິ່ງຖືກຕອ້ງທາງກາຍ **ມະໂນວິນຍານ** ຄືຄວາມຮູ້ສຶກຮູ້ເຣື້ອງທາງໃຈ ອັນນີ້ຄືວິນຍານຂັນ ກອງວິນຍານ

**ຂັນຫ້າ**

**-ຮູບ-ນາມ**

ຂັນຫ້ານີ້ຍໍ່ລົງໄດ້ເປັນສອງ ຄືຮູບຂັນ ກໍ່ຍໍ່ລົງເປັນຮູບເວທນາ ສັນຍາ ສັງຂານ ວິນຍານກໍ່ຍໍ່ ລົງເປັນນາມ ໃນຄຳວ່າ ນາມ ນັ້ນຕາມສັບແປວ່ານອ້ມໄປ ໂດຍທົ່ວໄປໃນຄຳວ່ານາມກໍ່ ຄືຊື່ ເມື່ອແປວ່າຊື່ກໍ່ຄືຫລັກແຕ່ວ່າເປັນຊື່ເອີ້ນບໍ່ມີຮູບຮ່າງປາກົດເວທນາ ສັນຍາສັງຂານ ວິນຍານ ກໍ່ຄືຫລັກແຕ່ແປເປັນຊື່ເອີ້ນ ບໍ່ມີຮູບຮ່າງປາກົດ
ແລະສິ່ງທີ່ບໍ່ມີຮູບຮ່າງປາກົດຢ່າງນີ້ກໍ່ມັກຈະເວົ້າວ່າເປັນນາມທັມ

ສ່ວນທີ່ມີຮູບຮ່າງປາກົດກໍ່ມັກຈະເວົ້າວ່າ ເປັນຊື່ຮູບທັມ ອັນນີ້ ເປັນອະທິບາຍງ່າຍໆ ວ່າ ເວທນາ ສັນຍາ ສັງຂານ ວິນຍານ ຍໍ່ລົງເປັນນາມກໍ່ຄືໝາຍ ຄວາມວ່າທັງສີ່ ນີ້ບໍ່ມີຮູບຮ່າງປາກົດຫລັກ ແຕ່ວ່າເປັນຊື່ເອີ້ນຄືເປັນນາມທັມເທົ່ານັ້ນ

ອີກຢ່າງນຶ່ງ ຄຳວ່ານາມ ທີ່ແປວ່ານອ້ມໄປນັ້ນກໍ່ຄືໝາຍຄວາມວ່າເປັນອາການຂອງ ຈິດ ທີ່ອາສັຍຢູ່ກັບກາຍອັນເປັນສ່ວນຮູບນີ້ ນອ້ມອອກຮູ້ອາຣົມຄືເຣື້ອງທັງຫລາຍທີ່ປະ ສົບທາງ ກາຍ ຄືທາງ **ອາຍົຕນະທັງຫົກຫຼືທາງທວານທັງຫົກ** ອາຍົຕນະທັງຫົກນັ້ນກໍ່ໄດ້ ແກ່ **ຕາ ຫູ ຮູດັງ ລີ້ນ ກາຍ** ແລະ **ມະນະ** ຄືໃຈເປັນທີ່ຕໍ່ຫຼືເປັນທວານຄືເປັນປະຕູສຳ ຫລັບທີ່ຈິດ ຈະນອ້ມອອກຮູ້ອາຣົມ ຄືເຣື້ອງທັງຫລາຍມີເຣື້ອງຮູບເປັນຕົ້ນແລະອາ ການທີ່ຈິດນອ້ມອອກ ຮູ້ນັ້ນມີ-4-ຢ່າງ ຄື

1-ນອ້ມອອກໃຫ້ຮູ້ເປັນສຸຂເປັນທຸກຫຼືເປັນກາງໆ ບໍ່ທຸກບໍ່ສຸຂ ກໍ່ເອີ້ນວ່າ ເວທນາ ຊຶ່ງ ເປັນຄວາມຮູ້ຂອງຈິດຢ່າງນຶ່ງ ຄືຮູ້ເປັນສຸຂເປັນທຸກຫຼືເປັນກາງໆ ບໍ່ທຸກບໍ່ສຸຂ

2-ນອ້ມອອກໃຫ້ຮູ້ຈຳ ຈຳຮູບ ຈຳສຽງ ເປັນຕົ້ນກໍ່ເອີ້ນວ່າ ສັນຍາ ຊຶ່ງເປັນຄວາມຮູ້ ຂອງຈິດອີກຢ່າງນຶ່ງ

3-ນອ້ມອອກໃຫ້ຮູ້ຄິດປຸງຫຼືປຸງຄິດເອີ້ນວ່າ **ສັງຂານ** ກໍ່ເປັນຄວາມຮູ້ຂອງຈິດຢ່າງນຶ່ງ

4-ນອ້ມອອກໃຫ້ຮູ້ສຶກເຫັນ ໃຫ້ຮູ້ສຶກໄດ້ຍິນເປັນຕົ້ນ ກໍ່ເປັນອາການຂອງຈິດອີກຢ່າງ ນຶ່ງ ເອີ້ນວ່າ **ວິນຍານ**-ເວທນາ ສັນຍາ ສັງຂານ ວິນຍານ ທັງ-4-ນີ້ເປັນຄວາມຮູ້ຂອງຈິດ ທີ່ສະແດງອອກ ຄືທີ່ນອ້ມອອກຮູ້ອາຣົມມີຮູບເປັນຕົ້ນ ທີ່ເຂົ້າມາທາງທວານທັງຫົກນັ້ນ ສະນັ້ນ ເວທນາ ສັນຍາ ສັງຂານ ວິນຍານ ຈຶ່ງເອີ້ນວ່າເປັນນາມ ຄືເປັນອາການຂອງຈິດ ທີ່ນອ້ມອອກຮູ້ອາຣົມ ຊຶ່ງເປັນຕົວຄວາມຮູ້ຂອງຈິດຂັ້ນນຶ່ງໆ ຈຶ່ງເອີ້ນວ່າ ນາມທັມ ເມື່ອ ຍໍ່ ເປັນສອງດັ່ງນີ້ ຮູບກໍ່ເປັນ **ຮູບຂັນ** ຄືກອງຮູບ ນາມກໍ່ເປັນ **ນາມຂັນ** ຄືກອງນາມ

**ອຸປາທານຂັນ**

ຄາວນີ້ຂັນຫ້າຫຼືນາມຮູບດັ່ງກ່າວ ໂດຍປົກຕິຂອງສາມັນຊົນຍອ່ມເປັນອຸປາທານຂັນ ຄື ຂັນເປັນທີ່ຍຶດຖື ເພາະວ່າສາມັນຊົນທຸກຄົນນັ້ນຍອ່ມມີອຸປາທານຄືຄວາມຍຶດຖືໃນຮູບ ໃນເວທນາ ໃນສັນຍາ ໃນສັງຂານ ໃນວິນຍານ ວ່າ **ເອຕະ ມະມະ ນີ້ເປັນຂອງເຮົາ -ເອໂສ ໝັສມິ ເຮົາເປັນໜີ້-ເອໂສ ເມ ອັດຕາ ໜີ້ເປັນອັດຕາຂອງເຮົາ**

ຄືມີຄວາມຍຶດຖືວ່າ ຮູບ ເວທນາ ສັນຍາສັງຂານ ວິນຍານ ເປັນຂອງເຮົາ ເຮົາເປັນຮູບ ເປັນເວທນາ ເປັນສັນຍາ ເປັນສັງຂານ ເປັນວິນຍານ ຮູບ ເວທນາ ສັນຍາ ສັງຂານ ວິນຍານ ເປັນອັດຕາ ຕົວຕົນຂອງເຮົາ ໂດຍປົກຕິຍ່ອມມີຄວາມຍຶດຖືຢູ່ດັ່ງນີ້ ເພາະສະນັ້ນຈຶ່ງເອີ້ນວ່າ **ອຸປາທານຂັນ** ເມື່ອເປັນອຸປາທານຂັນກໍ່ເປັນ **ຂັນຮູປທິ** ອຸປທິຖືຂັນ ອຸປທິ ນັ້ນແປວ່າເຄື່ອງເຂົ້າໄປຊິງໃຈເອົາໃວ້ ເຂົ້າໄປຈັບໃຈເອົາໄວ້ເຂົ້າໄປສິງໃຈເອົາໃວ້ເໝືອນ ຢ່າງທີ່ເວົ້າກັນວ່າຜີເຂົ້າສິງເຈົ້າເຂົ້າຊິງ ກໍ່ຄືວ່າເຈົ້າຫຼືຜີນັ້ນເຂົ້າໄປຊິງໃຈເອົາໃວ້ຂອງບຸກຄົນແຕ່ໃຈຂອງບຸກຄົນທີ່ຖືກເຈົ້າຫຼືຖືກຜີເຂົ້ານັ້ນ ກໍ່ກາຍເປັນຊື່ຂອງເຈົ້າຫຼືຂອງຜີທີ່ສິງຫຼືທີ່ເຂົ້າຊິງນັ້ນ ສັນໄດກໍ່ດີ ເມື່ອຂັນທັງຫ້າເປັນອຸປທິ ຄືເຂົ້າໄປຊິງເຂົ້າໄປສິງໃຈຂອງບຸກຄົນ ບຸກຄົນກໍ່ກາຍເປັນສື່ຂອງຂັນທັງຫ້າ ຂັນທັງຫ້ານີ້ກໍ່ກາຍເປັນສິ່ງທີ່ມີອຳນາດຄອບງຳໃຈຂອງບຸກຄົນດັ່ງຈະພວມເຫັນໄດ້ວ່າບຸກຄົນທົ່ວໄປນັ້ນ ຍ່ອມຢູ່ໃນອຳນາດຂັນຫ້າເປັນອັນຫລາຍໃນອຳນາດຂອງຮູບ ຂອງ ເວທນາ ຂອງສັນຍາ ຂອງສັງຂານ ຂອງວິນຍານ ຍໍ່ເຂົ້າກໍ່ຄືຂອງຮູບຂອງນາມ ຫຼືເວົ້າອີກ ຄຳນຶ່ງກໍ່ຄືວ່າ ຂອງກາຍຂອງໃຈອັນນີ້ຮູບນາມຫຼືວ່າຂັນຫ້າຫຼືວ່າກາຍໃຈ ອັນນີ້ກໍ່ກາຍເປັນສິ່ງທີ່ຄອບງຳກາຍໃຈຂອງບຸກຄົນກໍ່ເປັນຮູປທິ ອຸປທິຄືຂັນ -( ແລະເມື່ອເປັນຢ່າງນີ້ເມື່ອກ່າວອີກຢ່າງນຶ່ງບຸກຄົນກໍ່ຢູ່ໃນອຳນາດຂອງກິເລດຄືອຸປາທານຄວາມຍຶດຖືພ້ອມທັງຕັນຫາຄວາມດິ້ນຣົນທະຍານຢາກ-ຊຶ່ງທັງເບີດນີ້ອະວິດຊາຄືຄວາມທີ່ບໍ່ຮູ້ສັດຈະຄືຄວາມຈິງຈຶ່ງທຳໃຫ້ເກີດຕັນຫາເກີດອຸປາທານແລ້ວກໍ່ກົມຕ່າງໆທັງຕິດຢູ່ໃນອາຣົມຕ່າງໆມີຮູບເປັນຕົ້ນເມື່ອເປັນດັ່ງນີ້ບັນດາກິເລດທັງປວງກໍ່ດີບັນດາທີ່ກະທຳກໍ່ດີບັນດາອາຣົບຕ່າງໆ ທີ່ຜ່ານເຂົ້າມາທາງທວານທົກກໍ່ດີ ກໍ່ກາຍເປັນອຸປທິ ຄື ເຄື່ອງທີ່ເຂົ້າໄປຊິງໃຈຂອງບຸກຄົນຕໍ່ເນື່ອງກັນໄປທັງເບີດ ບຸກຄົນຈຶ່ງບໍ່ມີອິສຣະ ບໍ່ມີເສຣີຕອ້ງຢູ່ໃນອຳນາດຂອງເຄື່ອງຊິງເຫລົ່ານີ້ມັນຈຶ່ງວຸ້ນວາຍຢູ່ກັບເຄື່ອງຊິງເຫລົ່ານີ້ດັ່ງຈະພວມເຫັນໄດ້ວ່າບຸກຄົນເປັນອັນຫຼາຍນັ້ນກະສັບກະສາຍວຸ້ນວາຍຢູ່ດວ້ຍເຣື້ອງຂອງຂັນຫ້າເຣື້ອງຂອງກິເລດເຣື້ອງຂອງກັມແລະເຣື້ອງຂອງອາຣົມທັງຫລາຍທີ່ຜ່ານເຂົ້າມາທາງທວານທັງຫົກເພາະສະນັ້ນຈຶ່ງຕອ້ງເປັນທຸກເດືອດຣອ້ນແລະກໍ່ບໍ່ສາມາດທີ່ຈະເປື້ອງທຸກໄດ້ ທັງບັນດາເຄື່ອງຊິງໃຈເຫຼົ່ານີ້ກໍ່ປົກປິດບໍ່ໃຫ້ໄດ້ປັນຍາເຫັນສັດຈະ ຄືຄວາມຈິງ ຈຶ່ງພອກພູນອະວິຊາຄືຄວາມ ບໍ່ຮູ້ ພ້ອມທັງໂມຫະຄືຄວາມຫລົງໃຫ້ທະວີຫລາຍຍິ່ງຂຶ້ນ - ອ່ານຕໍ່ຊຸດໜ້າໃນທັມມະລີລາ

-ຈອຍ ອິສຣະ-